ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ 674/ພບ

ນະຄອນຫຼວງວຽງຈັນ, ວັນທີ 06 ເມສາ 2022

# ຂໍ້ຕົກລົງ
# ວ່າດ້ວຍທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ

- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 624/ນຍ, ລົງວັນທີ 22 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມຄຸ້ມຄອງບໍ່ແຮ່ ສະບັບເລກທີ 1227/ກຄບ, ລົງວັນທີ 30.03.2022

## ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ ການເຄື່ອນໄຫວ, ຂັ້ນຕອນ ແລະ ເງື່ອນໄຂການອອກອະນຸຍາດດຳເນີນທຸລະກິດກ່ຽວກັບທຸລະກິດໃຫ້ການ ບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ໃຫ້ມີ ຄວາມໂປ່ງໃສ, ມີປະສິດທິຜົນສູງ ແລະ ມີຄວາມປອດໄພ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ເຮັດໃຫ້ຊີວິດການເປັນຢູ່ ຂອງປະຊາຊົນລາວບັນດາເຜົ່າດີຂຶ້ນເທື່ອລະກ້າວ.

**ມາດຕາ 2 ທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ແມ່ນການດຳເນີນທຸລະກິດກ່ຽວກັບ ການບໍລິການວຽກງານຊອກຄົ້ນ, ສຳຫຼວດ, ສ້າງແຜນທີ່, ສຳຫຼວດທໍລະນີຟີຊິກ, ເຈາະສຳຫຼວດ, ຂຸດຄົ້ນ, ຂົນສົ່ງ, ວິໄຈ ແລະ ວຽກງານໃຫ້ຄຳປຶກສາດ້ານບໍ່ແຮ່ ແລະ ການບໍລິການອື່ນກ່ຽວກັບແຮ່ທາດ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳ ເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ການດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ

**ມາດຕາ 4 ການດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຕ້ອງມີທະບຽນວິສາຫະກິດ ຈາກກະຊວງອຸດ ສາຫະກຳ ແລະ ການຄ້າ ແລະ ໃບອະນຸຍາດດຳເນີນການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຈາກ ກະຊວງພະລັງງານ ແລະ ບໍ່ແຮ່.

**ມາດຕາ 5 ປະເພດທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ມີ ຫົກ ປະເພດ ດັ່ງນີ້:

1. ການດໍາເນີນທຸລະກິດໃຫ້ການບໍລິການ ຊອກຄົ້ນ ແລະ ສໍາຫຼວດແຮ່ທາດ;
2. ການດໍາເນີນທຸລະກິດໃຫ້ການບໍລິການ ເຈາະສໍາຫຼວດ;
3. ການດໍາເນີນທຸລະກິດໃຫ້ການບໍລິການ ຂຸດຄົ້ນບໍ່ແຮ່;
4. ການດໍາເນີນທຸລະກິດໃຫ້ການບໍລິການ ທາງດ້ານວິຊາການ ແລະ ການໃຫ້ຄໍາປຶກສາ ທາງດ້ານທໍລະນີສາດ;
5. ການດໍາເນີນທຸລະກິດໃຫ້ການບໍລິການ ທາງດ້ານວິຊາການ ແລະ ການໃຫ້ຄໍາປຶກສາ ທາງດ້ານບໍ່ແຮ່;
6. ການດໍາເນີນທຸລະກິດໃຫ້ການບໍລິການ ວິໄຈແຮ່ທາດ.

**ມາດຕາ 6 ເງື່ອນໄຂການດໍາເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ການຂໍດໍາເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ເປັນນິຕິບຸກຄົນ ທີ່ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ;
2. ມີປະຫວັດ ແລະ ປະສົບການ ການດໍາເນີນທຸລະກິດກ່ຽວກັບແຮ່ທາດທີ່ດີ;
3. ບໍ່ເຄີຍຖືກຖອນ ຫຼື ຖືກຍົກເລີກການດໍາເນີນທຸລະກິດກ່ຽວກັບແຮ່ທາດມາກ່ອນ ຍ້ອນການກະທໍາຜິດໂດຍເຈດຕະນາ;
4. ມີວິຊາການທີ່ມີຄຸນວຸດທິການສຶກສາ, ເຄີຍຜ່ານງານ ແລະ ມີປະສົບການຢ່າງໜ້ອຍ ຫ້າ ປີ ທີ່ກ່ຽວຂ້ອງກັບທຸລະກິດຕາມທີ່ຕົນໄດ້ຮ້ອງຂໍດໍາເນີນທຸລະກິດ;
5. ມີແຜນການດໍາເນີນທຸລະກິດ ຊຶ່ງປະກອບດ້ວຍ: ຈຸດປະສົງການລົງທຶນ, ໂຄງຮ່າງການຈັດຕັ້ງ, ຫ້ອງການ, ມູນຄ່າການລົງທຶນ, ບຸກຄະລາກອນ, ອຸປະກອນ, ພາຫະນະ ທີ່ຈໍາເປັນ ຫຼື ກ່ຽວຂ້ອງກັບໜ້າວຽກທີ່ຈະດໍາເນີນທຸລະກິດ;
6. ມີໃບຢັ້ງຢືນການເຄື່ອນໄຫວທາງດ້ານການເງິນ ຈາກທະນາຄານ ຫຼື ສະຖາບັນການເງິນໃດໜຶ່ງ, ມີຄວາມສາມາດເຂົ້າຫາແຫຼ່ງທຶນ.

**ມາດຕາ 7 ການປະກອບຄໍາຮ້ອງຂໍອອກໃບອະນຸຍາດເປັນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ການສະເໜີຂໍດໍາເນີນທຸລະກິດໃຫ້ບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ແມ່ນໃຫ້ປະກອບຄໍາຮ້ອງ ແລະ ສໍານວນເອກະສານ ສະເໜີຕໍ່ ກະຊວງພະລັງງານ ແລະ ບໍ່ແຮ່ ດັ່ງນີ້:

1. ຄໍາຮ້ອງຂໍດໍາເນີນທຸລະກິດ (ຕາມແບບພິມ);
2. ສໍາເນົາທະບຽນວິສາຫະກິດ, ບັດປະຈໍາຕົວ ແລະ ໜັງສືຜ່ານແດນ;
3. ກົດລະບຽບພາຍໃນ ຂອງບໍລິສັດ;
4. ໂຄງຮ່າງການຈັດຕັ້ງ ຂອງບໍລິສັດ;
5. ເອກະສານຢັ້ງຢືນກ່ຽວກັບກະແສເງິນສົດ ແລະ ແຫຼ່ງທຶນ;
6. ບັນຊີເຄື່ອງກົນຈັກ, ອຸປະກອນຮັບໃຊ້;
7. ປະຫວັດການເຄື່ອນໄຫວວຽກງານຜ່ານມາ ຂອງບໍລິສັດ;
8. ຊີວະປະຫວັດຫຍໍ້ ຂອງນັກວິຊາການ ພ້ອມດ້ວຍໃບຢັ້ງຢືນຄຸນວຸດທິການສຶກສາ ແລະ ໃບຢັ້ງຢືນການຜ່ານງານຕົວຈິງ.

ຂໍ້ມູນຂ້າງເທິງທີ່ແຈ້ງໃນການປະກອບເອກະສານຂໍໃບອະນຸຍາດດໍາເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຕ້ອງມີຕົວຈິງ, ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍ.

**ມາດຕາ 8 ການພິຈາລະນາຄຳຮ້ອງຂໍອອກໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ກະຊວງພະລັງງານ ແລະ ບໍ່ແຮ່ ຈະພິຈາລະນາ ອະນຸຍາດ ຫຼື ປະຕິເສດ ການຂໍອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຢ່າງເປັນລາຍລັກອັກສອນ ພາຍໃນ ສາມສິບ ວັນ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງ ແລະ ສຳນວນເອກະສານຄົບຖ້ວນເປັນຕົ້ນໄປ.

**ມາດຕາ 9 ໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ແມ່ນເອກະສານຢັ້ງຢືນການໃຫ້ສິດແກ່ຜູ້ໄດ້ຮັບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ທີ່ອອກໃຫ້ໂດຍ ກະຊວງພະລັງງານ ແລະ ບໍ່ແຮ່.

ໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຕ້ອງກຳນົດຂໍ້ຄວາມຕົ້ນຕໍ ດັ່ງນີ້:

1. ຊື່, ນາມສະກຸນ ແລະ ຕຳແໜ່ງ ຂອງຜູ້ທີ່ໄດ້ຮັບມອບໝາຍ ຈາກນິຕິບຸກຄົນທີ່ໄດ້ຮັບອະນຸຍາດ;
2. ທີ່ຢູ່ຂອງສຳນັກງານບໍລິສັດ, ບ່ອນຕິດຕໍ່ພົວພັນ;
3. ປະເພດການບໍລິການ, ອາຍຸໃບອະນຸຍາດ;
4. ທຶນນຳໃຊ້ເຂົ້າໃນການດຳເນີນທຸລະກິດ.

ເງື່ອນໄຂການນຳໃຊ້ ໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຕ້ອງຕິດໃບອະນຸຍາດໄວ້ບ່ອນທີ່ເປີດເຜີຍ ເຊັ່ນ: ຫ້ອງການພາກສະໜາມ ແລະ ສຳນັກງານໃຫຍ່ຂອງບໍລິສັດ.

ໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ບໍ່ສາມາດມອບ, ໂອນ ຫຼື ຂາຍ, ນຳໃຊ້ເພື່ອຮ່ວມທຶນກັບຜູ້ອື່ນ ແລະ ເປັນຫຼັກຊັບຄ້ຳປະກັນເງິນກູ້ ຫຼື ເປັນເອກະສານຕໍ່ລອງຜົນປະໂຫຍດອື່ນ.

**ມາດຕາ 10 ອາຍຸໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ໃບອະນຸຍາດ ດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດມີອາຍຸ ບໍ່ເກີນ ຫ້າ ປີ ແລະ ສາມາດ ຕໍ່ໄດ້.

**ມາດຕາ 11 ເງື່ອນໄຂການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ເງື່ອນໄຂຂອງການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ມີດັ່ງນີ້:

1. ຕ້ອງຍື່ນຄຳຮ້ອງກ່ອນ ເກົ້າສິບ ວັນ ທີ່ໃບອະນຸຍາດ ດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຈະໝົດອາຍຸ, ຖ້າກາຍກຳນົດເວລາດັ່ງກ່າວ ການຂໍຕໍ່ອາຍຸຈະບໍ່ໄດ້ຮັບການພິຈາລະນາ;
2. ສຳເນົາບັດປະຈຳຕົວ ແລະ ໜັງສືຜ່ານແດນ;
3. ບົດລາຍງານການເຄື່ອນໄຫວວຽກງານຜ່ານມາ, ການປະຕິບັດພັນທະທາງດ້ານການເງິນ ແລະ ພັນທະອື່ນຢ່າງຄົບຖ້ວນ ຕາມກົດໝາຍ, ສັນຍາ ແລະ ລະບຽບການ;
4. ແຜນການໃນຕໍ່ໜ້າ ຂອງບໍລິສັດ.

ບົດລາຍງານການເຄື່ອນໄຫວວຽກງານຜ່ານມາ ແລະ ແຜນການໃນຕໍ່ໜ້າຂອງບໍລິສັດ ຕ້ອງປະຕິບັດຕາມແບບຟອມ ຂອງກະຊວງພະລັງງານ ແລະ ບໍ່ແຮ່ ວາງອອກ.

**ມາດຕາ 12 ການບໍລິການ ດຳເນີນທຸລະກິດທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ຜູ້ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ກ່ອນຈະດຳເນີນການບໍລິການ ຕ້ອງມີສັນຍາດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ກັບບໍລິສັດທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດກ່ຽວກັບແຮ່ທາດ ທີ່ຖືກຕ້ອງຕາມກົດໝາຍ. ພ້ອມດຽວກັນນັ້ນ ຜູ້ໃຫ້ການບໍລິການດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຕ້ອງແຈ້ງຂໍ້ຜູກພັນໃນສັນຍາ ຂອງສັນຍາການໃຫ້ບໍລິການດັ່ງກ່າວ ພາຍໃນກຳນົດເວລາ ສິບຫ້າ ວັນລັດຖະການ ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອຮັບຊາບ.

**ມາດຕາ 13 ການລາຍງານ**

ຜູ້ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຕ້ອງສະຫຼຸບ ແລະ ລາຍງານການດຳເນີນວຽກງານຂອງຕົນ ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ ຕາມແບບຟອມການລາຍງານ ທີ່ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ກຳນົດໄວ້.

**ມາດຕາ 14 ການໂຈະໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຈະຖືກໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ດຳເນີນການໃຫ້ການບໍລິການພາຍໃນກຳນົດເວລາ ໜຶ່ງ ປີ ນັບແຕ່ມື້ໄດ້ຮັບອະນຸຍາດເປັນຕົ້ນໄປ;
2. ບໍ່ດຳເນີນວຽກງານຕາມໜ້າວຽກ ແລະ ເງື່ອນໄຂທີ່ກຳນົດໄວ້ໃນໃບອະນຸຍາດ;
3. ຂາດການລາຍງານຄວາມຄືບໜ້າການປະຕິບັດວຽກງານ ປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ;
4. ບົດລາຍງານວຽກງານບໍ່ສອດຄ່ອງຕາມຄວາມເປັນຈິງ;
5. ດຳເນີນການບໍ່ມີຄວາມປອດໄພຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ບໍ່ມີໜ່ວຍງານຮັບຜິດຊອບດ້ານສຸຂະພາບ ແລະ ແຮງງານຂອງຜູ້ອອກແຮງງານ;
6. ມີຂໍ້ຂັດແຍ່ງພາຍໃນບໍລິສັດ ແລະ ພາກສ່ວນອື່ນ;
7. ບໍ່ມີ ການສະຫຼຸບການບັນຊີ ແລະ ການປະຕິບັດພັນທະທາງດ້ານການເງິນຕາມລະບຽບກົດໝາຍ.

ການແຈ້ງໂຈະໃບອະນຸຍາດແຕ່ລະຄັ້ງ ຕ້ອງແຈ້ງເປັນລາຍລັກອັກສອນ ພ້ອມທັງກຳນົດເວລາໃນການແກ້ໄຂຂໍ້ບົກຜ່ອງດັ່ງກ່າວ.

**ມາດຕາ 15 ການຖອນໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຈະຖືກຖອນໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ປະຕິບັດຕາມການແຈ້ງໂຈະ ຕາມທີ່ກຳນົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້;
2. ໃບອະນຸຍາດ, ໃບທະບຽນວິສາຫະກິດ, ໃບທະບຽນອາກອນ ໝົດອາຍຸ;
3. ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດໃນການຖອນໃບອະນຸຍາດ.

ການຖອນໃບອະນຸຍາດ ຕ້ອງແແຈ້ງເປັນລາຍລັກອັກສອນ.

**ມາດຕາ 16 ການສິ້ນສຸດໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຈະຖືກສິ້ນສຸດໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໃບອະນຸຍາດໝົດອາຍຸ;
2. ຕາມການສະເໜີຂອງຜູ້ລົງທຶນດ້ວຍຄວາມສະໝັກໃຈ;
3. ໃບອະນຸຍາດຖືກຖອນ.

ການສິ້ນສຸດໃບອະນຸຍາດ ຕ້ອງແຈ້ງເປັນລາຍລັກອັກສອນ.

**ມາດຕາ 17 ການຍົກເລີກໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ພາຍຫຼັງ ໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຖືກແຈ້ງຖອນ ຫຼື ສິ້ນສຸດ ແລ້ວ ກະຊວງພະລັງງານ ແລະ ບໍ່ແຮ່ ແມ່ນໃຫ້ປະຕິບັດ ດັ່ງນີ້:

1. ຜູ້ຖືໃບອະນຸຍາດຕ້ອງນຳເອົາໃບອະນຸຍາດ ທີ່ຖືກຖອນ ຫຼື ສິ້ນສຸດ ມາສົ່ງຄືນໃຫ້ ກະຊວງພະລັງງານ ແລະ ບໍ່ແຮ່;
2. ກະຊວງພະລັງງານ ແລະ ບໍ່ແຮ່ ຕ້ອງຈ້ຳກາຍົກເລີກ ໃສ່ໃບອະນຸຍາດທີ່ຖືກຖອນ ຫຼື ສິ້ນສຸດ;
3. ກະຊວງພະລັງງານ ແລະ ບໍ່ແຮ່ ຕ້ອງອອກແຈ້ງການກ່ຽວກັບການຖອນ ຫຼື ສິ້ນສຸດ ໃບອະນຸຍາດທາງສື່ມວນຊົນ.

ການຍົກເລີກ ໃນກໍລະນີໃດກໍຕາມ ຈະບໍ່ພາໃຫ້ຜູ້ດຳເນີນກິດຈະການກ່ຽວກັບແຮ່ທາດ ພົ້ນຈາກພັນທະ ແລະ ໜີ້ສິນ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ຕໍ່ລັດ.

## ໝວດທີ 3
## ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ

**ມາດຕາ 18 ສິດ ຂອງຜູ້ດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ຜູ້ໄດ້ຮັບອະນຸຍາດດຳເນີນທຸລະກິດ ໃຫ້ການບໍລິການທີ່ຕິດພັນກັບທຸລະກິດ ກ່ຽວກັບແຮ່ທາດ ມີສິດ ດັ່ງນີ້:

1. ດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຕາມໜ້າວຽກ ແລະ ເງື່ອນໄຂທີ່ກຳນົດໄວ້ໃນໃບອະນຸຍາດ;
2. ສະເໜີຂໍຕໍ່, ໂຈະ, ຖອນ ຫຼື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ;
3. ປະສານສົມທົບກັບ ຂະແໜງການພະລັງງານ ແລະ ບໍ່ແຮ່, ພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກ່ຽວກັບການດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຂອງຕົນ.

**ມາດຕາ 19 ພັນທະ ຂອງຜູ້ດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ຜູ້ໄດ້ຮັບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ມີພັນທະ ດັ່ງນີ້:

1. ປະຕິບັດໜ້າວຽກຂອງຕົນ ຕາມໃບອະນຸຍາດ, ສັນຍາ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ນຳໃຊ້ແຮງງານ, ຜະລິດຕະພັນ ທ້ອງຖິ່ນ ຫຼື ພາຍໃນປະເທດ ໃຫ້ຫຼາຍເທົ່າທີ່ເປັນໄປໄດ້; ນຳໃຊ້ເຕັກນິກ-ເຕັກໂນໂລຊີ ທີ່ມີປະສິດທິຜົນໃນການປ້ອງກັນມົນລະພິດ; ສະໜອງເຄື່ອງມື, ອຸປະກອນ, ສິ່ງເອື້ອອຳນວຍຕ່າງໆ ໃນການຮັກສາຄວາມປອດໄພ ແລະ ສຸຂະພາບ ຂອງຜູ້ອອກແຮງງານ; ເອົາໃຈໃສ່ໃນສະຫວັດດີການສັງຄົມ ແລະ ນະໂຍບາຍອື່ນ ຕໍ່ຜູ້ອອກແຮງງານ;
3. ນຳໃຊ້ ແລະ ສ້າງແຮງງານລາວ ດ້ວຍການຖ່າຍທອດຄວາມຊຳນານງານ ແລະ ເຕັກໂນໂລຊີ ທັງໃນໄລຍະສັ້ນ ແລະ ໄລຍະຍາວ ເພື່ອທົດແທນການນຳເຂົ້າແຮງງານຈາກຕ່າງປະເທດ;
4. ປະຕິບັດພັນທະທາງດ້ານການເງິນ ເປັນຕົ້ນ ພາສີ, ອາກອນ, ຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ ວ່າດ້ວຍ ສ່ວຍສາອາກອນ, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ວາງອອກ;
5. ຮັບຜິດຊອບຕໍ່ການບໍລິການຂອງຕົນ ແລະ ຜົນກະທົບ ຂອງການດຳເນີນທຸລະກິດທີ່ຕົນໄດ້ກໍ່ຂຶ້ນ;

6. ສ້າງແຜນການກ່ຽວກັບການດໍາເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ທີ່ຕົນໄດ້ຮັບອະນຸຍາດ ໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ຮັບຊາບ;
7. ໃຫ້ການຮ່ວມມື ແລະ ອໍານວຍຄວາມສະດວກແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດໃນການກວດກາ ວຽກງານການບໍລິການ ຫຼື ບຸກຄົນອື່ນ ທີ່ເຄື່ອນໄຫວຕາມຈຸດປະສົງໃດໜຶ່ງທີ່ໄດ້ຮັບອະນຸຍາດ;
8. ລາຍງານການເຄື່ອນໄຫວກ່ຽວກັບການດໍາເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ທີ່ຕົນໄດ້ຮັບອະນຸຍາດ ໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ຮັບຊາບ ຢ່າງເປັນປົກກະຕິ;
9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ການຄຸ້ມຄອງ ແລະ ກວດກາ

**ມາດຕາ 20 ອົງການຄຸ້ມຄອງ ແລະ ກວດກາການດໍາເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ**

ອົງການຄຸ້ມຄອງ ແລະ ກວດກາ ການດໍາເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ແມ່ນ ກະຊວງພະລັງງານ ແລະ ບໍ່ແຮ່.

ອົງການຄຸ້ມຄອງ ແລະ ກວດກາ ການດໍາເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ປະກອບດ້ວຍ:

1. ກົມຄຸ້ມຄອງບໍ່ແຮ່;
2. ກົມທໍລະນີສາດ ແລະ ແຮ່ທາດ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງບໍ່ແຮ່**

ກົມຄຸ້ມຄອງບໍ່ແຮ່ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງ, ຕິດຕາມ ກວດກາ ຕໍ່ຜູ້ດໍາເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ດັ່ງນີ້:

1. ສ້າງ, ປັບປຸງຂໍ້ກໍານົດ ແລະ ລະບຽບການກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາການດໍາເນີນທຸລະກິດ ໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຕາມພາລະບົດບາດຂອງຕົນ;
2. ຄົ້ນຄວ້າ, ໃຫ້ຄໍາແນະນໍາ, ຄໍາປຶກສາ, ຊຸກຍູ້ ແລະ ສົ່ງເສີມການດໍາເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ດ້ວຍຮູບການຕ່າງໆ ກ່ຽວກັບວຽກງານການດໍາເນີນທຸລະກິດໃຫ້ການບໍລິການຂຸດຄົ້ນບໍ່ແຮ່ ແລະ ການບໍລິການໃຫ້ຄໍາປຶກສາທາງດ້ານວິຊາການດ້ານບໍ່ແຮ່;
3. ສະຫຼຸບສັງລວມສະຖິຕິ, ຂໍ້ມູນ ຂ່າວສານຕ່າງໆ ກ່ຽວກັບການດໍາເນີນກິດຈະການຂອງທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ດ້ານການບໍລິການຂຸດຄົ້ນບໍ່ແຮ່ ແລະ ການບໍລິການໃຫ້ຄໍາປຶກສາທາງດ້ານວິຊາການດ້ານບໍ່ແຮ່ ເພື່ອລາຍງານຂັ້ນເທິງ;
4. ອອກ, ຕໍ່, ໂຈະ, ຖອນ, ຍົກເລີກ ໃບອະນຸຍາດດໍາເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ດ້ານການດໍາເນີນທຸລະກິດໃຫ້ການບໍລິການຂຸດຄົ້ນບໍ່ແຮ່ ແລະ ການບໍລິການໃຫ້ຄໍາປຶກສາທາງດ້ານວິຊາການດ້ານບໍ່ແຮ່;
5. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຕິດຕາມກວດກາ ການດໍາເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຕາມສິດ ແລະ ພາລະບົດບາດຂອງຕົນ;
6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງກົມທໍລະນີສາດ ແລະ ແຮ່ທາດ**

ກົມທໍລະນີສາດ ແລະ ແຮ່ທາດ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງ, ຕິດຕາມ ກວດກາ ຕໍ່ຜູ້ດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ດັ່ງນີ້:

1. ສ້າງ, ປັບປຸງຂໍ້ກຳນົດ ແລະ ລະບຽບການກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາການດຳເນີນທຸລະກິດ ໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຕາມພາລະບົດບາດຂອງຕົນ;
2. ຄົ້ນຄວ້າ, ໃຫ້ຄຳແນະນຳ, ຄຳປຶກສາ, ຊຸກຍູ້ ແລະ ສົ່ງເສີມການດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ດ້ວຍຮູບການຕ່າງໆ ກ່ຽວກັບວຽກງານການດຳເນີນທຸລະກິດໃຫ້ການບໍລິການຂຸດຄົ້ນ ແລະ ສຳຫຼວດແຮ່ທາດ, ການບໍລິການເຈາະສຳຫຼວດ, ການບໍລິການໃຫ້ຄຳປຶກສາທາງດ້ານວິຊາການດ້ານທໍລະນີສາດ, ການບໍລິການວິໄຈແຮ່ທາດ;
3. ສະຫຼຸບສັງລວມສະຖິຕິ, ຂໍ້ມູນ ຂ່າວສານຕ່າງໆ ກ່ຽວກັບການດຳເນີນກິດຈະການຂອງທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ດ້ານການບໍລິການຂຸດຄົ້ນ ແລະ ສຳຫຼວດແຮ່ທາດ, ການບໍລິການເຈາະສຳຫຼວດ, ການບໍລິການໃຫ້ຄຳປຶກສາທາງດ້ານວິຊາການດ້ານທໍລະນີສາດ, ການບໍລິການວິໄຈແຮ່ທາດ ເພື່ອລາຍງານຂັ້ນເທິງ;
4. ອອກ, ຕໍ່, ໂຈະ, ຖອນ, ຍົກເລີກ ໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ດ້ານການດຳເນີນທຸລະກິດໃຫ້ການບໍລິການຂຸດຄົ້ນ ແລະ ສຳຫຼວດແຮ່ທາດ, ການບໍລິການເຈາະສຳຫຼວດ, ການບໍລິການໃຫ້ຄຳປຶກສາທາງດ້ານວິຊາການດ້ານທໍລະນີສາດ, ການບໍລິການວິໄຈແຮ່ທາດ;
5. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຕິດຕາມກວດກາ ການດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຕາມສິດ ແລະ ພາລະບົດບາດຂອງຕົນ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 23 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນການຄຸ້ມຄອງ ແລະ ການດຳເນີນທຸລະກິດໃຫ້ການບໍລິການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ ຢ່າງມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບ, ກົດໝາຍ ຂອງ ສປປ ລາວ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 24 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ມາດຕະການທາງແພ່ງ ຫຼື ຖືກລົງໂທດຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 25 ການຈັດຕັ້ງປະຕິບັດ**

ກະຊວງພະລັງງານ ແລະ ບໍ່ແຮ່, ກົມຄຸ້ມຄອງບໍ່ແຮ່, ກົມທໍລະນີສາດ ແລະ ແຮ່ທາດ, ສະຖາບັນຄົ້ນຄວ້າພະລັງງານ ແລະ ບໍ່ແຮ່, ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ ເປັນຜູ້ຜັນຂະຫຍາຍ ແລະ ປະສານ

ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ບັນດາຂະແໜງການອື່ນທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

**ມາດຕາ 26 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ລັດຖະມົນຕີ**

ປອ. ດາວວົງ ພອນແກ້ວ